ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ (856-21) 260283

ສຳເລັດກອງປະຊຸມສະພາບໍລິຫານທະນາຄານແຫ່ງ ສປປ ລາວ ຄັ້ງທີ I ປະຈຳປີ 2023

ໃນຕອນບ່າຍຂອງວັນທີ 10 ກຸມພາ 2023 ກອງປະຊຸມສະພາບໍລິຫານ ທະນາຄານແຫ່ງ ສປປ ລາວ (ທຫລ) ຄັ້ງ ທີ I ປະຈຳປີ 2023 ໄດ້ໄຂຂຶ້ນພາຍໃຕ້ການເປັນປະທານຂອງທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການ ທຫລ, ປະທານ ສະພາບໍລິຫານ ທຫລ, ພ້ອມດ້ວຍການເຂົ້າຮ່ວມຂອງສະມາຊິກສະພາບໍລິຫານ ທຫລ ແລະ ບັນດາຄະນະກົມຈາກກົມ ກອງທີ່ກ່ຽວຂ້ອງພາຍໃນ ທຫລ.

ກອງປະຊຸມໃນຄັ້ງນີ້ໄດ້ໄຂຂຶ້ນເພື່ອເປັນການສະຫຼຸບ-ຕີລາຄາຜົນການເຄື່ອນໄຫວວຽກງານທະນາຄານແຫ່ງ ສປປ ລາວ ປະຈຳປີ 2022 ແລະ ກຳນົດທິດທາງແຜນການ ແລະ ວຽກງານຈຸດສຸມ ປະຈຳປີ 2023 ຊຶ່ງປະກອບມີຄື: ❶ ການລາຍງານເຄື່ອນໄຫວວຽກງານພົ້ນເດັ່ນໂດຍສັງເຂບຂອງ ທຫລ ປະຈຳປີ 2022 ແລະ ທິດທາງແຜນການປະຈຳປີ 2023; ❷ ການລາຍງານການຈັດຕັ້ງປະຕິບັດແຜນເງິນຕາຂອງ ທຫລ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023; ❸ ລາຍງານການຈັດຕັ້ງປະຕິບັດແຜນງົບປະມານຂອງ ທຫລ ປະຈຳປີ 2022 ແລະ ແຜນງົບປະມານ ປະຈຳປີ 2023 ແລະ ວຽກສຳຄັນອີກຈຳນວນໜຶ່ງ.

ກອງປະຊຸມ ໄດ້ດຳເນີນມາເປັນເວລາເຄິ່ງວັນ ດ້ວຍບັນຍາກາດຟົດຟື້ນ ແລະ ມີການຄົ້ນຄວ້າປະກອບຄຳຄິດ-ຄຳເຫັນແຕ່ລະດ້ານຢ່າງລະອຽດ-ກົງໄປກົງມາ ຊຶ່ງເຮັດໃຫ້ກອງປະຊຸມໃນມື້ນີ້ບັນລຸໝາກຜົນຕາມຄາດໝາຍທີ່ກຳນົດໄວ້.

 # ຂ່າວ-ພາບ: ວັນປະເສີດ ສົມບຸນຂັນ.

ຢູ່ເມືອງລາວ ໃຊ້ເງິນກີບລາວ ຊາດລາວກ້າວໄປ